*Souphanouvong University Journal of Multidisciplinary Research anddevelopment*
*2025, Vol. 11, Special Issue, 183-189*
*https://doi.org/10.69692/SUJMRD11Special183*

# Creating Competitive Advantages for Business Trade Entrepreneurs in Luang Prabang city, Luang Prabang Province

**Somyot Layaseng[1], Phonevilay Silivong[2], Sangthong Sifongxay[3]**
*Organizational Resource Management Department, Academic Management Office, Souphanouvong University, Lao PDR*

***Correspondence:** Somyot Layaseng, Faculty of Economics and Tourism, Souphanouvong University, Lao PDR Tel: +856 2055770018, Email: yot556@gmail.com*
*[2]Office of the President, Souphanouvong University, Lao PDR*
*[3]Faculty of Economics and Tourism, Souphanouvong University, Lao PDR*

***Article Info:***
***Submitted: November 20, 2025***
***Revised: December 10, 2025***
***Accepted: December 18, 2025***

## Abstract

This research study aims to examine the competitive situation of business trade operators and to study the creation of competitive advantages of business trade operators in Luang Prabang Municipality, Luang Prabang Province, using quantitative questionnaires to collecting data from a sample group of 170 business trade operators in Luang Prabang Municipality, and the statistics used in the analysis are frequency, percentage, mean, and standard deviation.

The findings revealed that the competitive situation of business trade entrepreneurs in Luang Prabang city, Luang Prabang Province, according to industry competition, was found to have high-level pressure, which comes from: the pressure of current business trade competitors in terms of their ability to manage business trade operations with the most cost-effective unit cost compared to competitors; the pressure of entry by new competitors in terms of product costs and business management costs being so low that new competitors cannot achieve them; the pressure from the bargaining power of suppliers/raw material providers in terms of the ability to source products/raw materials from other sources with lower costs; the pressure from the bargaining power of buyers in terms of customers being unable to find substitute products due to differences in price and quality; and the pressure from the bargaining power of substitute products in terms of the ability to adapt strategies in seeking new product formats to meet consumer demands. The creation of competitive advantages of business entrepreneurs in Luang Prabang city, Luang Prabang Province was found to be at a high level, which comes from: differentiation in terms of businesses introducing new product models that differ from competitors to the market and creating customer impressions; rapid response in terms of the ability to introduce new products and respond quickly to customer demands; relationship activities in terms of maintaining good and close relationships with customers to immediately respond to changing customer needs; and cost leadership in terms of the ability to reduce operational costs by using available resources efficiently.

**Keywords:** *Internal environmental factors, Business trade competition, External environmental factors, Competitive advantage*

## 1. ພາກສະເໜີ

ລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນ ໃນການສົ່ງເສີມ ແລະ ພັດທະນາຜູ້ປະກອບກິດຈະການ ໃນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍສະເພາະຂະແໜງການຄ້າ ຄື: 1) ສົ່ງເສີມພາກສ່ວນຕ່າງໆ ສ້າງສູນຝຶກ ແລະ ຝຶກອົບຮົມເພື່ອສ້າງ ແລະ ພັດທະນາຜູ້ປະກອບການກິດຈະການ ເພດຍິງ, ໄວໜຸ່ມ ແລະ ຄົນພິການ ໃຫ້ຮູ້ກ່ຽວກັບການເລີ່ມຕົ້ນ ແລະ ດຳເນີນກິດຈະການໃນຮູບແບບຕ່າງໆ; 3) ສົ່ງເສີມ ແລະ ເງື່ອນໄຂ ໃຫ້ເກີດມີຮູບແບບລາຍໃໝ່, ທຸລະກິດແຟຣນຊາຍ, ທຸລະກິດເພື່ອສັງຄົມ ແລະ ຮູບແບບອື່ນ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບການກິດຈະການໃໝ່; 3) ໃຫ້ການຊ່ວຍເຫຼືອຜູ້ປະກອບການໃນການພັດທະນາຕົນເອງ ດ້ວຍການຈັດຝຶກອົບຮົມ, ສະໜອງທຶນສົມທົບ ຫຼື ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ທັງພາຍໃນ ແລະ ຕ່າງປະເທດ;

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

4) ສ້າງ ແລະ ບັນຈຸການຮຽນຮູ້ກ່ຽວກັບການປະກອບກິດຈະການ ເຂົ້າໃນຫຼັກສູດໃນລະບົບການສຶກສາ; 5) ສົ່ງເສີມການຈັດກິດຈະກຳກ່ຽວກັບການສ້າງຜູ້ປະກອບກິດຈະການ ເຊັ່ນ: ການແຂ່ງຂັນແຜນທຸລະກິດ, ຈຳລອງການປະກອບກິດຈະການ ແລະ ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ (Ministry of industry and commerce of Lao PDR, 2022)

ທຸລະກິດການຄ້າເປັນຂະແໜງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີບົດບາດສຳຄັນ ໃນພື້ນຖານພັດທະນາທີ່ຍັ້ງຢືນ, ເປັນກົນໄກໃນພື້ນຖານທາງດ້ານເສດຖະກິດ ແລະ ເສີມສ້າງຄວາມກ້າວໜ້າທາງດ້ານເສດຖະກິດ ລວມທັງເປັນກົນໄກໃນການແກ້ໄຂບັນຫາຄວາມທຸກຍາກ ໂດຍມີບົດບາດສຳຄັນຄື: 1) ກໍ່ໃຫ້ເກີດມີການສ້າງວຽກເຮັດງານທຳໃຫ້ປະຊາຊົນໃນທ້ອງຖິ່ນ; 2) ເປັນຈຸດກຳເນີດຂອງຜູ້ສົນໃຈການລົງທຶນຂອງຜູ້ປະກອບການລາຍໃໝ່ ເນື່ອງຈາກກິດຈະການໃນທຸລະກິດການຄ້າໃຊ້ເງິນທຶນບໍ່ສູງ ແລະ ມີຄວາມສ່ຽງນ້ອຍກວ່າການລົງທຶນໃນອຸດສາຫະກຳຂະໜາດໃຫຍ່; 3) ເປັນບ່ອນຝຶກອົບຮົມວິຊາຊີບຂອງແຮງງານປະເພດຕ່າງໆ ເຊິ່ງສາມາດຝຶກອົບຮົມຜົນການຮຽນຮູ້ຈາກປະສົບການການເຮັດວຽກຕົວຈິງ; 4) ກໍ່ໃຫ້ເກີດການເຊື່ອມໂຍງກັບກິດຈະການຂະໜາດໃຫຍ່ ຫຼື ກິດຈະການອື່ນໆທີ່ກ່ຽວຂ້ອງ; 5) ເພີ່ມມູນຄ່າໃຫ້ວັດຖຸດິບພາຍໃນປະເທດເພາະເປັນອຸດສາຫະກຳທີ່ຊັບພະຍາກອນມາຜະລິດສິນຄ້າເປັນຫຼັກ; 6) ເປັນການສ້າງລາຍໄດ້ໃຫ້ປະເທດຊາດ ໂດຍສະເພາະພາກການຜະລິດເພື່ອການສົ່ງອອກ ແລະ ພາກການທ່ອງທ່ຽວ; 7) ເປັນການປ້ອງກັນການຜູກຂາດໃນລະບົບເສດຖະກິດ ເນື່ອງຈາກທຸລະກິດການຄ້າຍ່ອມຊ່ວຍໃຫ້ເກີດການແຂ່ງຂັນ ໃນການດຳເນີນທຸລະກິດ ແລະ ການແຂ່ງຂັນທຸລະກິດທີ່ເປັນທຳ ເຊິ່ງຈະກໍ່ໃຫ້ເກີດປະສິດທິພາບຕໍ່ລະບົບເສດຖະກິດໂດຍລວມ. ໂດຍການປະກອບທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີ່ຂຶ້ນທະບຽນນຳຫ້ອງການອຸດສາຫະກຳ ແລະ ການຄ້າ ມີຈຳນວນ ທັງໝົດ 170 ຫົວໜ່ວຍ (Industry and Commerce Office of Luang Prabang City, 2024).

ບັນຫາຜູ້ປະກອບການທຸລະກິດທຸກໆປະເພດ ຈຸລະວິສາຫະກິດ, ທຸລະກິດຂະໜາດນ້ອຍ ແລະ ທຸລະກິດຂະໜາດກາງ ຕ້ອງປະເຊີນໜ້າກໍ່ຄື ບັນຫາດ້ານເຕັກໂນໂລຢີ, ບັນຫາທາງການຕະຫຼາດ, ບັນຫາດ້ານແຮງງານ, ບັນຫາການຈຳກັດການບໍລິຫານ, ບັນຫາການການສົ່ງເສີມຂອງລັດ, ບັນຫາຂໍ້ຈຳກັດດ້ານການບໍລິການສົ່ງເສີມພັດທະນາອົງກອນລັດ ແລະ ເອກະຊົນ, ບັນຫາຈຳກັດຂໍ້ມູນຂ່າວສານ, ບັນຫານການແຂ່ງຂັນກັບທຸລະກິດຂະໜາດໃຫຍ່, ບັນຫາຄວາມບໍ່ໝັ້ນໃຈໃນສິນຄ້າ ແລະ ການບໍລິການ, ບັນຫາຄວາມຫຼາກຫຼາຍຂອງສິນຄ້າໃນຕະຫຼາດ, ບັນຫາການຂາດແຄນເງິນທຶນ ແລະ ບັນຫາການສະແຫວ່ງຫາເງິນທຶນ ເຊິ່ງເຫັນໄດ້ວ່າບັນຫາຜູ້ປະກອບການມາຈາກປັດໃຈທາງນອກ ແລະ ປັດໃຈພາຍໃນ, ສະນັ້ນຜູ້ປະກອບການ ຈຸລະວິສາຫະກິດ, ທຸລະກິດຂະໜາດນ້ອຍ ແລະ ທຸລະກິດຂະໜາດກາງ ຕ້ອງມີການສົ່ງເສີມໃຫ້ທຸລະກິດເກີດມີເຄືອຂ່າຍທາງທຸລະກິດເພີ່ມຂຶ້ນທັງພາຍໃນ ແລະ ຕ່າງປະເທດ, ກຳນົດຍຸດທະສາດທາງການຕະຫຼາດ ແລະ ສ້າງຄວາມສາມາດໃນການປະກອບທຸລະກິດຂອງຜູ້ປະກອບການ ເຊິ່ງຈະເຮັດໃຫ້ເກີດມີຄວາມສາມາດໃນການແຂ່ງຂັນກັບທຸລະກິດໃນອານາຄົດໄດ້, ນອກຈາກນັ້ນ ຜູ້ປະກອບການທຸລະກິດບໍລິການ ຈຳຕ້ອງມີການປັບຕົວ ໃນປະເດັນຄວາມຢູ່ຫຼອດ ແລະ ການເຕີບໂຕຂອງຈຸນລະວິສາຫະກິດ, ວິສະຫະກິດຂະໜາດນອ້ຍ ແລະ ວິສາຫະກິດຂະໜາດກາງ ມີ ຄວາມສຳພັນໂດຍກົງກັບກົນລະຍຸດການພັດທະນາທຸລະກິດຂອງທຸລະກິດຂະໜາດຕ່າງໆ ລວມທັງທຸລະກິດຂະໜາດນອ້ຍ ແລະ ຂະໜາດກາງ, ເນື່ອງຈາກການບັນລຸວັດຖຸປະສົງການພັດທະນາຂອງທຸລະກິດຄື: ການບັນລຸເປົ້າຫມາຍໃນ ແຕ່ລະລະດັບ ເລີ່ມແຕ່ຄວາມສາມາດໃນການຢູ່ລອດໃນໄລຍະເບື້ອງຕົ້ນ, ຫລັງຈາກນັ້ນຄືຄວາມສາມາດໃນການ ສ້າງກຳໄລ ແລະ ສຸດທ້າຍຄືການເຕີບໂຕຢ່າງຍືນຍົງໃນໄລຍະຍາວ. ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ຄວາມສຳເລັດຂອງການ ພັດທະນາທຸລະກິດຂັ້ນພື້ນຖານຈະຕ້ອງມາຈາກການກຳນົດກົນລະຍຸດເພື່ອຄວາມຢູ່ລອດ ແລະ ການເຕີບໂຕຂອງ ທຸລະກິດນັ້ນໆ (Industry and Commerce Office of Luang Prabang City, 2024)

ບັນຫາການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ, ທຸລະກິດການຄ້າໄດ້ມີການພັດທະນາຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງເພື່ອໃຫ້ເໝາະສົມກັບການປ່ຽນແປງສະພາບເສດຖະກິດໃນປັດຈຸບັນເຮັດໃຫ້ການດຳເນີນທຸລະກິດຕ້ອງປະເຊີນໜ້າກັບການແຂ່ງຂັນສູງຂຶ້ນ ແລະ ຜູ້ປະກອບການຕ້ອງຊອກຫາຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໂດຍການດຳເນີນທຸລະກິດການຄ້າພົບບັນຫາ ຄື: 1) ບັນຫາທາງດ້ານເສດຖະກິດຍັງບໍ່ໝັ້ນທ່ຽງ ແລະ ການຜະລິດສິນຄ້າຍັງບໍ່ຫຼາກຫຼາຍ ແລະ ຍັງບໍ່ເປັນທ່າແຮງໃນການສົ່ງອອກ; 2) ບັນຫາການວິເຄາະສະພາບແວດລ້ອມ ເພື່ອປັບປຸງການລົງທຶນ ແລະ ການດຳເນີນທຸລະກິດຍັງເຮັດບໍ່ທັນສອດຄ່ອງຕາມນະໂຍບາຍຂອງລັດຖະບານ; 3) ບັນຫາການປະຕິບັດມາດຕະການເພື່ອຊຸກຍູ້ຜູ້ປະກອບການພາຍໃນຍັງບໍ່ເປັນເຈົ້າການພັດທະນາຕົນເອງ ແລະ ຂາດປະສິດທິພາບໃນການແຂ່ງຂັນ; 4) ການຫັນເປັນຄວາມທັນສະໄໝຂອງຜູ້ປະກອບການທຸລະກິດເພື່ອຕອບສະໜອງກັບຄວາມຕ້ອງການຂອງລູກຄ້າ (Industry and Commerce Office of Luang Prabang City, 2024).

ຈຸດປະສົງໃນການຄົ້ນຄວ້າໃນຄັ້ງນີ້ເພື່ອ: 1) ສຶກສາສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລະ 2) ສຶກສາການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

## 2. ວິທີການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບປະລິມານ ໂດຍໃຊ້ຂໍ້ມູນປະຖົມພູມເປັນຫຼັກ ໂດຍນຳໃຊ້ແບບສອບຖາມເປັນເຄື່ອງມືໃນການຄົ້ນຄວ້າ ແລະ ການເກັບລວບລວມຂໍ້ມູນຈາກຜູ້ປະກອບກິດຈະການທີ່

ດຳເນີນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍປະກອບມີ ກຸ່ມຕົວຢ່າງ, ເຄື່ອງມືໃນການຄົ້ນຄວ້າ, ການກຳເກັບລວບລວມຂໍ້ມູນ ແລະ ວິເຄາະຂໍ້ມູນ.

**2.1 ກຸ່ມຕົວຢ່າງ**

ປະຊາກອນເປົ້າໝາຍທີ່ໃຊ້ເຂົ້າໃນການສຶກສາ ຄື ຜູ້ປະກອບກິດຈະການທີ່ດຳເນີນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ (ຜູ້ປະກອບກິດຈະການການຄົນລາວ) ເຊິ່ງມີຈຳນວນທັງໝົດ 170 ຫົວໜ່ວຍ.

**2.2 ເຄື່ອງມືໃນການຄົ້ນຄວ້າ**

ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນແມ່ນແບບສອບຖາມ ເຊິ່ງປະກອບມີ 5 ພາກສ່ວນ ຄື: ປັດໄຈສ່ວນບຸກຄົນຂອງຂອງຜູ້ປະກອບການທຸລະກິດການຄ້າ, ສະພາບການແຂ່ງຂັນທຸລະກິດການຄ້າ, ປັດໄຈພາຍໃນຂອງທຸລະກິດ, ປັດໄຈສະພາບແວດລ້ອມພາຍນອກຂອງທຸລະກິດ, ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

ໃນການສຶກສາໄດ້ອີງໃສ່ແນວຄິດການວິເຄາະການແຂ່ງຂັນອຸດສາຫະກຳ ຂອງ Porter &Milar (1985), ແນວຄິດຄວາມສາມາດຂອງຜູ້ປະກອບກິດຈະການ ຂອງ Dess et al., 2005, ທິດສະດີປັດໄຈແວດລ້ອມພາຍນອກ ຂອງ Gupta (2013), ແນວຄິດການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນ ຂອງ Porter (2005) ແລະ ນອກຈາກນັ້ນບົດຄົ້ນຄວ້າຂອງ Anoree (2021), Singvilay (2021), Sopaponerungshi (2019), Khonthong (2017), Nakkasem & Pasunon (2018) Syoudomphanh (2023) ເພື່ອເປັນແນວທາງໃນການສ້າງເຄື່ອງມື.

**2.3 ການເກັບກຳລວບລວມຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນດ້ວຍຕົນເອງ ໂດຍແຈກຢາຍແບບສອບຖາມໃຫ້ຜູ້ປະກອບການ ທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈຳນວນ 170 ຄົນ ເຊິ່ງຜູ້ປະກອບການໄດ້ຕອບແບບສອບຖາມຕາມຄວາມເປັນຈິງ. ຫຼັງຈາກຜູ້ປະກອບການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕອບແລ້ວເກັບລວມຂໍ້ມູນຢ່າງເປັນລະບົບ ລວມທັງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວມາປ້ອນຂໍ້ມູນເຂົ້າໂປແກຣມ SPSS ເພື່ອດຳເນີນການວິເຄາະ ແລະ ແປຜົນການຄົ້ນຄວ້າ.

**2.4 ວິທີວິເຄາະຂໍ້ມູນ**

**ສ່ວນທີ 1:** ການວິເຄາະສະພາບການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 2:** ການວິເຄາະລະດັບປັດໄຈພາຍໃນຂອງທຸລະກິດ ໃນການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 3:** ການວິເຄາະປັດໄຈພາຍນອກຂອງທຸລະກິດ ໃນການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 4:** ການວິເຄາະການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**3. ຜົນໄດ້ຮັບ**

**3.1 ສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າ.**

ຈາກຜົນການວິເຄາະພົບວ່າຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີ່ຕອບແບບສອບຖາມຈຳນວນ 170 ຄົນ ເຊິ່ງມາຈາກແຮງກົດດັນຈາກສະພາບການແຂ່ງຂັນໃນການປະກອບກິດຈະການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຢູ່ໃນລະດັບສູງ ດ້ວຍຄ່າສະເລ່ຍເທົ່າກັບ 3.44 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.31 ມາຈາກແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປັດຈຸບັນ ໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມື່ອປຽບທຽບກັບຄູ່ແຂ່ງຂັນ; ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕ່ຳຈົນເຮັດໃຫ້ຄູ່ແຂ່ງຂັນລາຍໃໝ່ບໍ່ສາມາດເຮັດໄດ້; ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ ໃນດ້ານແຮງກົດດັນແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; ແຮງກົດດັນຈາກອຳນາດຕໍ່ລອງສິນຄ້າທົດແທນ ໃນດ້ານແຮງກົດດັນການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ; ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕ່ຳກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ (ຕາຕະລາງ 1).

ປະກອບກິດຈະການທີ່ດຳເນີນທຸລະກິດການຄ້າ ຢູ່ພາຍໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕອບແບບສອບຖາມ ຈຳນວນ 170 ຄົນ ໂດຍລວມໃຫ້ຄວາມສຳຄັນ ປັດໄຈລັກສະນະການເປັນຜູ້ປະກອບການເພື່ອການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍດ້ວຍຄ່າສະເລ່ຍເທົ່າກັບ 3.60 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.33 ເຊິ່ງມາຈາກປັດໄຈຄວາມຫ້າວຫັນໃນການປະຕິບັດງານໃນດ້ານຄວາມພະຍາຍາມທີ່ຈະສະແຫວງຫາໂອກາດໃໝ່ເຊັ່ນ: ການສະແຫຼ່ງຫາສິນຄ້າໃໝ່, ການສະແຫຼ່ງຫາກຸ່ມຕະຫຼາດໃໝ່ໆ ເປັນຕົ້ນ; ດ້ານການມີ

ອິດສະຫຼະໃນການບໍລິຫານງານໃນດ້ານການສະໜັບສະໜູນໃຫ້ບຸກຄະລາກອນ ຫຼື ທີມງານມີອິດສະຫຼະໃນການປະຕິບັດວຽກງານຢ່າງເຕັມທີ; ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນໃນດ້ານການປັບຕົວທຸລະກິດການຄ້າຕາມສະພາບແວດລ້ອມ ແລະ ເສດຖະກິດສູງກວ່າຄູ່ແຂ່ງຂັນເພື່ອໃຫ້ມີຄວາມສາມາດໃນການແຂ່ງຂັນ; ປັດໄຈຄວາມມີນະວັດຕະກໍາໃນດ້ານຄວາມພະຍາຍາມທີ່ຈະສະແຫວ່ງຫາການນໍາໃຊ້ເຕັກໂນໂລຊີ, ຄວາມຄິດໃໝ່ ແລະ ສິ່ງແປກໃໝ່ ທີ່ນໍາໄປສູ່ການພັດທະນາສິນຄ້າ ແລະ ການຄ້າ; ປັດໄຈຄວາມກ້າສ່ຽງໃນດ້ານຄວາມກ້າສ່ຽງໃນການໃຊ້ຊັບສິນ ຫຼື ເງິນຈໍານວນຫຼວງຫຼາຍສໍາລັບການປະກອບທຸລະກິດການຄ້າ ແລະ ການລົງທຶນ (ຕາຕະລາງ 3).

ຜູ້ປະກອບກິດຈະການທີ່ດໍາເນີນທຸລະກິດການຄ້າ ຢູ່ພາຍໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕອບແບບສອບຖາມ ຈໍານວນ 170 ຄົນ ໂດຍລວມໃຫ້ຄວາມສໍາຄັນ ປັດໄຈສະພາບແວດລ້ອມພາຍນອກເພື່ອໃຊ້ເປັນໂອກາດການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 3.44 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.23 ເຊິ່ງມາຈາກປັດໄຈດ້ານວັດທະນາທໍາ ແລະ ສັງຄົມໃນດ້ານຄ່ານິຍົມຂອງສັງຄົມ ແລະ ລູກຄ້າໃນການອຸປະໂພກ-ບໍລິໂພກສິນຄ້າ; ປັດໄຈດ້ານເຕັກໂນໂລຊີໃນດ້ານການນໍາໃຊ້ເຕັກໂນໂລຊີເຂົ້າໃນການດໍາເນີນທຸລະກິດການຄ້າ; ປັດໄຈດ້ານເສດຖະກິດໃນດ້ານຄວາມເໝາະສົມຕົ້ນທຶນຂອງສິນຄ້າ/ວັດຖຸດິບ; ປັດໄຈດ້ານກົດໝາຍໃນດ້ານກົດໝາຍຄຸ້ມຄອງຜູ້ບໍລິໂພກ; ປັດໄຈດ້ານການເມືອງໃນດ້ານການເບິ່ງເຫັນໂອກາດຈາກສະຖຽນລະພາບທາງການການເມືອງໃນການດໍາເນີນທຸລະກິດການຄ້າ; ປັດໄຈສິ່ງແວດລ້ອມໃນດ້ານສະພາບອາກາດທີ່ມີການປ່ຽນແປງ (ຕາຕະລາງ 4).

### 3.2 ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ.

ຜູ້ປະກອບກິດຈະການທີ່ດໍາເນີນທຸລະກິດການຄ້າ ຢູ່ພາຍໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ທີ່ຕອບແບບສອບຖາມຈໍານວນ 170 ຄົນ ໂດຍລວມໃຫ້ຄວາມສໍາຄັນການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 3.59 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.36 ເຊິ່ງມາຈາກການສ້າງຄວາມແຕກຕ່າງໃນດ້ານທຸລະກິດນໍາແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມທັບໃຈໃຫ້ແກ່ລູກຄ້າ; ດ້ານຕອບສະໜອງຢ່າງວ່ອງໄວໃນດ້ານຄວາມສາມາດນໍາສະເໜີສິນຄ້າໃໝ່ໆ ແລະ ການຕອບສະໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວ; ການເປັນຜູ້ນໍາທາງຕົ້ນທຶນໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດໍາເນີນງານໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ (ຕາຕະລາງ 2).

## 4. ວິພາກຜົນ

1) ຈາກການຄົ້ນຄວ້າສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕາມທິດສະດີການແຂ່ງຂັນໃນອຸດສາຫະກໍາ (Five-Forces Model) ຂອງ Porter (1980) ພົບວ່າແຮງກົດດັນຈາກສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງຢູ່ໃນລະດັບສູງ ເຊິ່ງມາຈາກແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ ໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມື່ອປຽບທຽບກັບຄູ່ແຂ່ງຂັນ; ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕໍ່າຈິ່ງເຮັດໃຫ້ຄູ່ແຂ່ງຂັນລາຍໃໝ່ບໍ່ສາມາດເຮັດໄດ້; ແຮງກົດດັນຈາກອໍານາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ ໃນດ້ານແຮງກົດດັນຈາກແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; ແຮງກົດດັນຈາກອໍານາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນຈາກລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕໍ່າກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ ແລະ ແຮງກົດດັນຈາກອໍານາດຕໍ່ລອງສິນຄ້າທົດແທນ ໃນດ້ານແຮງກົດດັນຈາກການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Khunthong (2017) ທີ່ສຶກສາການຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດເຮືອນພັກ ໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ໃນທຸກດ້ານຂອງແຮງກົດດັນ 5 ປະການຂອງ Porter (1980) ແຕ່ລະດັບແຮງກົດດັນຈາກການແຂ່ງຂັນທຸລະກິດເຮືອນພັກໃນເທດສະບານເມືອງຊຽງ ໃໝ່ ແຂວງຊຽງໃໝ່ ຢູ່ໃນລະດັບສູງ. ສອດຄ່ອງກັບການຄົ້ນຄວ້າຂອງ Sopaponerungshi (2019) ທີ່ໄດ້ສຶກສາປັດໄຈການຂັບເຄື່ອນການແຂ່ງຂັນທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສໍາເລັດທາງທຸລະກິດຂອງອຸດສາຫະກໍາການສົ່ງອອກເຄື່ອງປະດັບຂອງໄທ ໃນທຸກດ້ານຂອງແຮງກົດດັນ 5 ປະການຂອງ Porter (1980) ແຕ່ລະດັບແຮງກົດດັນຈາກການແຂ່ງຂັນທຸລະກິດຂອງອຸດສາຫະກໍາການສົ່ງອອກເຄື່ອງປະດັບຂອງໄທ ຢູ່ໃນລະດັບສູງ. ສະນັ້ນ, ຄວນກໍານົດຍຸດທະສາດໃນການແຂ່ງຂັນທາງທຸລະກິດ ເພື່ອສ້າງໃຫ້ທຸລະກິດມີຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດ ໃນອານາຄົດ ໂດຍນໍາແຮງກົດດັນ 5 ປະການຂອງ Porter (1980) ໄດ້ປັບປຸງທຸລະກິດໃຫ້ມີອໍານາດຕໍ່ລອງທາງທຸລະກິດສູງ ໂດຍສະເພາະແຮງກົດດັນຈາກ: 1) ຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ ໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມື່ອປຽບທຽບກັບຄູ່ແຂ່ງຂັນ; 2) ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕໍ່າຈິ່ງເຮັດໃຫ້ຄູ່ແຂ່ງຂັນລາຍ ໃໝ່ບໍ່ສາມາດເຮັດໄດ້;

3) ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບໃນດ້ານແຮງກົດດັນຈາກແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; 4) ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນຈາກລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕ່ຳກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ ແລະ 5) ແຮງກົດດັນ ຈາກອຳນາດຕໍ່ລອງສິນຄ້າທົດແທນໃນດ້ານແຮງກົດດັນຈາກການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ.

2) ຈາກການຄົ້ນຄວ້າການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ພົບວ່າການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ ໃນນະຄອນຫຼວງພະບາງຢູ່ໃນລະດັບຫຼາຍ ເຊິ່ງມາຈາກການສ້າງຄວາມແຕກຕ່າງໃນດ້ານທຸລະກິດນຳແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມພໍໃຈໃຫ້ແກ່ລູກຄ້າ; ການເປັນຜູ້ນຳທາງຕົ້ນທຶນ ໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດຳເນີນງານໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບດ້ານຕອບສະໜອງຢ່າງວ່ອງໄວ ໃນດ້ານຄວາມສາມາດນຳສະເໜີສິນຄ້າໃໝ່ໆ ແລະ ການຕອບສະ ໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວຕາມລຳດັບການຄົ້ນຄວ້າສອດຄ່ອງກັບ Syoudomphanh (2023) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການແຂ່ງຂັນຂອງທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ໃນທຸກດ້ານຄື ດ້ານການເປັນຜູ້ນຳທາງຕົ້ນທຶນ , ການສ້າງຄວາມແຕກຕ່າງ, ດ້ານຕອບສະໜອງຢ່າງວ່ອງໄວ. ເຊິ່ງການຄົ້ນຄວ້າສອດຄ່ອງກັບ Khunthong (2017) ທີ່ໄດ້ສຶກສາການຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດເຮືອນພັກ ໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ໃນດ້ານຍຸດທະສາດການຕອບສະໜອງຢ່າງວ່ອງໄວ, ຍຸດທະສາດການສ້າງຄວາມແຕກຕ່າງ ແລະ ຍຸດທະສາດການເປັນຜູ້ນຳທາງຕົ້ນທຶນ. ການຄົ້ນຄວ້າຍັງສອດຄ່ອງກັບ Singvilay (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃນດ້ານດ້ານຄວາມແຕກຕ່າງໃນບໍລິການ; ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານຕົ້ນທຶນຕ່ຳຕາມລຳດັບ. ການຄົ້ນຄວ້າສອດຄ່ອງກັບ Anoree (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສຳເລັດຂອງຜູ້ປະກອບການ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນແຂວງຣາຊະບຸຣີ (ໄທ) ໃນດ້ານການເປັນຜູ້ນຳທາງຕົ້ນທຶນ, ການສ້າງຄວາມແຕກຕ່າງ, ດ້ານຕອບສະໜອງຢ່າງ. ການຄົ້ນຄວ້າສອດຄ່ອງກັບ Nakkasem & Pasunon (2018) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນເຂດກຸງເທບມະຫານະຄອນ(ໄທ) ໃນດ້ານດ້ານຄວາມແຕກຕ່າງໃນບໍລິການ; ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານຕົ້ນທຶນຕ່ຳ. ສະນັ້ນ, ຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕ້ອງໃຊ້ຍຸດທະສາດໃນການດຳເນີນທຸລະກິດ ຄື: 1) ສ້າງຄວາມແຕກຕ່າງໃນດ້ານທຸລະກິດນຳແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມພໍໃຈໃຫ້ແກ່ລູກຄ້າ; 2) ຕ້ອງການຕອບສະໜອງຢ່າງວ່ອງໄວໃຫ້ກັບລູກຄ້າ ໃນດ້ານຄວາມສາມາດນຳສະເໜີສິນຄ້າໃໝ່ໆ ທີ່ສາມາດການຕອບສະ ໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວ; 3) ຕ້ອງສ້າງໃຫ້ທຸລະກິດການເປັນຜູ້ນຳທາງຕົ້ນທຶນ ໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດຳເນີນງານ ໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ.

## 5. ສະຫຼຸບ

ສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຕາມທິດສະດີການແຂ່ງຂັນໃນອຸດສາຫະກຳ (Five-Forces Model) ພົບວ່າແຮງກົດດັນຈາກສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າໃນນະຄອນຫຼວງພະບາງ ແຂວງຫຼວງພະບາງຢູ່ໃນລະດັບສູງ ເຊິ່ງມາຈາກແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ ໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມື່ອປຽບທຽບກັບຄູ່ແຂ່ງຂັນ; ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕ່ຳຈິນເຮັດໃຫ້ຄູ່ແຂ່ງຂັນລາຍໃໝ່ບໍ່ສາມາດເຮັດໄດ້; ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ ໃນດ້ານແຮງກົດດັນຈາກແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນຈາກລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕ່ຳກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ ແລະ ແຮງກົດດັນຈາກອຳນາດຕໍ່ລອງສິນຄ້າທົດແທນ ໃນດ້ານແຮງກົດດັນຈາກການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ.

ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ພົບວ່າການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບກິດຈະການການທຸລະກິດການຄ້າ ໃນນະຄອນຫຼວງພະບາງຢູ່ໃນລະດັບຫຼາຍ ເຊິ່ງມາຈາກການສ້າງຄວາມແຕກຕ່າງໃນດ້ານທຸລະກິດນຳແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມພໍໃຈໃຫ້ແກ່ລູກຄ້າ; ການເປັນຜູ້ນຳທາງຕົ້ນທຶນ ໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດຳເນີນງານ; ດ້ານຕອບສະໜອງຢ່າງວ່ອງໄວ ໃນດ້ານຄວາມສາມາດນຳສະເໜີສິນຄ້າໃໝ່ໆ ແລະ ການຕອບສະໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວ ໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງ

ທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Anoree, S. (2021). *Factors affecting competitive advantage and success of entrepreneurs and small and medium enterprises in Ratchaburi province.* [Online] 2023. Available from: https://sure.su.ac.th/xmlui/handle/123456789/26608.

Bajaj Finance. (2024). *Internal factors of business environment.* Retrieved from https://www.bajajfinserv.in/internal-factors-of-business-environment

Dess, G.G., Lumpkin, G.T., & Taylor, M.L. (2005). *Strategic management: creating competitive advantage (2nd ed.).* New York: McGraw-Hill.

Environmental Protection Agency. (2018). *Report on the Environment: Acidity in Lakes and Streams.* https://cfpub.epa.gov/roe/indicator.cfm?i=12

Gupta, A. (2013). Environment & PEST Analysis: An Approach to External Business Environment. *International Journal of Modern Social Sciences, 2,* 34-43.

Industry and Commerce Office of Luang Prabang City. (2024). *Annual Summary Report.* Luang Prabang City. http://ir.mju.ac.th/dspace/bitstream/123456789/102/1/5806401013.pdf

Khunthong, P. (2017). *Building competitive advantage for guest house business in Muang district, Chiang Mai.* Master thesis of business administration in business Administration. Mawjo University. [Online] 2023. Available from: http://ir.mju.ac.th/dspace/bitstream/123456789/102/1/5806401013.pdf.

Ministry of industry and commerce of Lao PDR. (2022). *Laws with the promotion of micro-enterprises, small and medium-sized enterprises.* [Online] 2023. Available from: https://msmepa.org/

Nakkasem, W., & Pasunon, P. (2018). Factors Affecting the Competitive Advantage of Service Business Entrepreneurs in Bangkok. [Online] 2023. Available from: https://he02.tci-thaijo.org/index.php/Veridian-E-Journal/article/view/120933/93421

Porter, M.E., & Milar, V.E. (1985). *How Information gives you competitive advantage.* Harvard Business Review: P149-160.

Porter, M.E. (2005). *The Competitive Advantage creating and sustaining superior Performance.* New York: The Free Press.4.

Singvilay, L. (2021). *Factors affecting the competitive advantage of Service Business entrepreneurs in the Xay district municipality of Oudomxay province.* Master of business administration, Economics and Tourism. Souphanouvong University

Sopaponerungshi, M. (2019). *Competitive driving factors affected of competitive advantage and business Success of gems and jewelry export industries in Thailand.* [Online] 2023. Available from: http://dspace.bu.ac.th/bitstream/123456789/3988/1/mathee_sopa.pdf

Syoudomphanh, P., Yangsansay, C., & Vatthana, M. (2023). Factors affective to the competitiveness Hotel Business in Luang Prabang. *Souphanouvong University Journal Multidisciplinary Research and Development, 9*(2), 180–188. Retrieved from https://www.su-journal.com/index.php/su/article/view/389


ຕາຕະລາງ 1: ສະແດງເຖິງຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນດ້ານສະພາບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດການຄ້າ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

| ລ/ດ | ສະພາບການແຂ່ງຂັນໃນການປະກອບທຸລະກິດການຄ້າ | n | $\overline{X}$ | S.D | ລະດັບການແຂ່ງຂັນ |
|---|---|---|---|---|---|
| 1 | ແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ | 170 | 3.81 | 0.46 | ສູງ |
| 2 | ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ | 170 | 3.71 | 0.53 | ສູງ |
| 3 | ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ | 170 | 3.44 | 0.43 | ສູງ |
| 4 | ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ | 170 | 2.99 | 0.25 | ປານກາງ |
| 5 | ແຮງກົດດັນຈາກອກນາດຕໍ່ລອງສິນຄ້າທົດແທນ | 170 | 3.23 | 0.33 | ປານກາງ |

| | | | | | |
|---|---|---|---|---|---|
| | **ລວມ** | 170 | 3.44 | 0.31 | ສູງ |

ຕາຕະລາງ 2: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນດ້ານການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດຂອງຜູ້ປະກອບກິດຈະການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

| ລ/ດ | ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ | n | $\overline{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ການສ້າງຄວາມແຕກຕ່າງ | 170 | 3.81 | 0.53 | ຫຼາຍ |
| 2 | ການເປັນຜູ້ນຳທາງຕົ້ນທຶນ | 170 | 3.37 | 0.44 | ປານກາງ |
| 3 | ດ້ານຕອບສະໜອງຢ່າງວ່ອງໄວ | 170 | 3.60 | 0.39 | ຫຼາຍ |
| | **ລວມ** | 170 | 3.59 | 0.36 | ຫຼາຍ |

ຕາຕະລາງ 3: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນ ປັດໄຈລັກສະນະການເປັນຜູ້ປະກອບກິດຈະການ ຂອງຜູ້ປະກອບການໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

| ລ/ດ | ປັດໄຈລັກສະນະການເປັນຜູ້ປະກອບການ | n | $\overline{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ປັດໄຈການມີອິດສະຫຼະໃນການບໍລິຫານງານ | 170 | 3.79 | 0.53 | ຫຼາຍ |
| 2 | ປັດໄຈຄວາມມີນະວັດຕະກຳ | 170 | 3.37 | 0.49 | ປານກາງ |
| 3 | ປັດໄຈຄວາມກ້າສຽງ | 170 | 3.17 | 0.29 | ປານກາງ |
| 4 | ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ | 170 | 3.77 | 0.48 | ຫຼາຍ |
| | ປັດໄຈຄວາມຫ້າວຫັນໃນການປະຕິບັດງານ | 170 | 3.91 | 0.54 | ຫຼາຍ |
| | ລວມ | 170 | 3.60 | 0.33 | ຫຼາຍ |

ຕາຕະລາງ 4: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນ ປັດໄຈສະພາບແວດລ້ອມພາຍນອກ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ.

| ລ/ດ | ປັດໄຈສະພາບແວດລ້ອມພາຍນອກ | n | $\overline{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ປັດໄຈດ້ານການເມືອງ | 170 | 3.21 | 0.28 | ປານກາງ |
| 2 | ປັດໄຈດ້ານເສດຖະກິດ | 170 | 3.52 | 0.41 | ຫຼາຍ |
| 3 | ປັດໄຈດ້ານວັດທະນາທຳ ແລະ ສັງຄົມ | 170 | 3.75 | 0.36 | ຫຼາຍ |
| 4 | ປັດໄຈດ້ານເຕັກໂນໂລຊີ | 170 | 3.56 | 0.43 | ຫຼາຍ |
| 5 | ປັດໄຈສິ່ງແວດລ້ອມ | 170 | 3.16 | 0.30 | ປານກາງ |
| 6 | ປັດໄຈດ້ານກົດໝາຍ | 170 | 3.43 | 0.45 | ຫຼາຍ |
| | ລວມ | 170 | 3.44 | 0.23 | ຫຼາຍ |